## ປຶ້ມຝຶກຫັດ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1







ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
**2012**

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

# ປຶ້ມແບບຝຶກຫັດ

# ເນື້ອໃນໜ່ວຍການສອນ

# ຕົວຂອງຂ້ອຍ

## ສຳລັບເດັກ

## ຊັ້ນອະນຸບານສຶກສາ ປີທີ 1

ຮຽບຮຽງໂດຍ: ແສງມະນີ ສຸພັນທະລີບ

ກວດແກ້ໂດຍ: ພວງຄຳ ສີມສະນິດ
ທອງແກ້ວ ອາສາ
ປາກຮຽນ ຫຼວງໄຊຊະນະ
ສີມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ

ເຂົ້າໜ້າໂດຍ: ຫຸມພັນ ຂັນທະວີ
ສີວິໄລ ແກ້ວມະນີວັນ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດພ່ວຍຕົວຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງຮ່າງກາຍຂອງເດັກມີດັ່ງນີ້:

1. ຮ່າງກາຍຂອງຂ້ອຍ.
2. ການຈະເລີນເຕີບໃຫຍ່ຂອງຮ່າງກາຍ.
3. ການຮັກສາຄວາມສະອາດ ແລະ ຄວາມປອດໄພ.
4. ການປະຕິບັດຕົນທີ່ເໝາະສົມກັບອາຍຸ.

ການນຳໃຊ້ປຶ້ມບົດເຝິກຫັດຕົວຂອງຂ້ອຍ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາ ແລ້ວ, ພ້ອມກັນນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


ກິດຈະກຳການຮຽນ-ການສອນໜ່ວຍຕົວຂອງຂ້ອຍ ສຳລັບຊັ້ນອະນຸບານສຶກສາ ປີທີ 1......... 1
ຮ່າງກາຍຂອງຂ້ອຍ.................................................................................................... 2
ຊື່ ແລະ ເພດ............................................................................................................ 3
ສ່ວນຕ່າງໆຂອງຮ່າງກາຍ.......................................................................................... 4
ສ່ວນຕ່າງໆ ຂອງຮ່າງກາຍ (ຕໍ່)................................................................................. 5
ສ່ວນຕ່າງໆຂອງຮ່າງກາຍ (ຕໍ່)................................................................................... 6
ໜ້າທີ່ຂອງຫູ ........................................................................................................... 7
ໜ້າທີ່ຂອງຕາ.......................................................................................................... 8
ໜ້າທີ່ຂອງດັງ.......................................................................................................... 9
ໜ້າທີ່ຂອງປາກ ແລະ ແຂ້ວ..................................................................................... 10
ໜ້າທີ່ຂອງຕີນ ......................................................................................................... 11
ໜ້າທີ່ຂອງມື........................................................................................................... 12
ການຈະເລີນເຕີບໃຫຍ່ຂອງຮ່າງກາຍ.......................................................................... 13
ກິນອາຫານ ............................................................................................................. 14
ດື່ມນ້ຳ..................................................................................................................... 15
ນອນ/ພັກຜ່ອນ......................................................................................................... 16
ອະນາໄມຮ່າງກາຍ.................................................................................................... 17
ຂັບຖ່າຍ.................................................................................................................. 18
ຮູບຮ່າງລັກສະນະ..................................................................................................... 19
ຮູບຮ່າງລັກສະນະ (ຕໍ່)............................................................................................. 20
ຮັກສາຄວາມສະອາດ ແລະ ຄວາມປອດໄພ.................................................................. 21
ຜົມສະອາດ.............................................................................................................. 22
ຜົມສະອາດ (ຕໍ່)....................................................................................................... 23
ຫູສະອາດ................................................................................................................ 24
ຕາ ສະອາດ ............................................................................................................. 25
ດັງສະອາດ .............................................................................................................. 26
ປາກ ແລະ ແຂ້ວ ສະອາດ........................................................................................... 27
ຕີນສະອາດ.............................................................................................................. 28

ມືສະອາດ.............................................................................................................. 29
ປະຕິບັດຕົນທີ່ເໝາະສົມກັບອາຍຸ.............................................................................. 30
ນຸ່ງເຄື່ອງ.............................................................................................................. 31
ແຕ່ງຕົວ.............................................................................................................. 32
ກິນ .............................................................................................................. 33
ດື່ມ.............................................................................................................. 34
ມ້ຽນເຄື່ອງນອນ .............................................................................................. 35
ມ້ຽນເຄື່ອງຕົນເອງ.............................................................................................. 36

# ກິດຈະກຳການຮຽນ-ການສອນ

# ຕົວຂອງຂ້ອຍ

ສຳລັບຊັ້ນອະນຸບານສຶກສາປີທີ 1



**ເນື້ອໃນການຮຽນຂອງໜ່ວຍຕົວຂອງຂ້ອຍປະກອບມີ:**

1. ຮ່າງກາຍຂອງຂ້ອຍ.
2. ການຈະເລີນເຕີບໃຫຍ່ຂອງຮ່າງກາຍ.
3. ຮັກສາສຸຂະພາບ ແລະ ຄວາມປອດໄພ.
4. ປະຕິບັດຕົນທີ່ເໝາະສົມກັບອາຍຸ.

# ຮ່າງກາຍຂອງຂ້ອຍ



**ເນື້ອໃນການຮຽນໃນຫົວຂໍ້ຮ່າງກາຍຂອງຂ້ອຍປະກອບມີ:**

1. ຊື່ ແລະ ເພດ.
2. ສ່ວນຕ່າງໆຂອງຮ່າງກາຍ.
3. ໜ້າທີ່ຂອງຫູ, ຕາ ແລະ ດັງ.
4. ໜ້າທີ່ຂອງປາກ ແລະ  ແຂ້ວ.
5. ໜ້າທີ່ຂອງຕີນ ແລະ ມື.

# ຊື່ ແລະ ເພດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ ແລະ ເພດຂອງຕົນເອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ຮູບໃດແມ່ນເດັກນ້ອຍຍິງ ແລະ ຮູບໃດແມ່ນເດັກນ້ອຍຊາຍ? ໃນຫ້ອງຮຽນໃຜແດ່ເປັນເດັກນ້ອຍຍິງ, ໃຜແດ່ເປັນເດັກນ້ອຍຊາຍ? ຊື່ແທ້ຂອງຫຼານຢູ່ໂຮງຮຽນວ່າແນວໃດ? ຊື່ຫຼິ້ນຢູ່ເຮືອນຂອງຫຼານວ່າແນວໃດ?
- ສະຫຼຸບ: ເດັກນ້ອຍທຸກຄົນມີຊື່ແທ້, ຊື່ຫຼິ້ນ ແລະ ເພດຍິງ, ຊາຍ.
- ທາສີຮູບເດັກນ້ອຍຍິງ ແລະ ຊາຍ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງຮ່າງກາຍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກສ່ວນປະກອບຂອງຮ່າງກາຍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຜົມ, ຕາ, ດັງ, ຫູ, ປາກ, ແຂ້ວຂອງຫຼານຢູ່ໃສ?
- ສະຫຼຸບ: ຜົມ, ຕາ, ດັງ, ຫູ, ປາກ, ແຂ້ວ ແລະ ລີ້ນ ມີຢູ່ສ່ວນຫົວ.
- ທາສີຮູບສ່ວນຕ່າງໆຂອງຮ່າງກາຍ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງຮ່າງກາຍ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກສ່ວນປະກອບຂອງຮ່າງກາຍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໜ້າເອິກ, ທ້ອງ, ນົມ, ບ່າ, ແອວ ແລະ ກະໂພກ ຂອງຫຼານຢູ່ໃສ?
- ສະຫຼຸບ: ໜ້າເອິກ, ທ້ອງ, ນົມ, ບ່າ, ແອວ ແລະ ກະໂພກ ຢູ່ສ່ວນເລົາຄີງ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ສ່ວນຕ່າງໆຂອງຮ່າງກາຍ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກສ່ວນປະກອບຂອງຮ່າງກາຍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ແຂນ, ມື, ຂາ ແລະ ຕີນ ຂອງຫຼານຢູ່ໃສ?
- ສະຫຼຸບ: ສ່ວນແຂນມີ: ແຂນ ແລະ ມື, ສ່ວນຂາມີ: ຂາ ແລະ ຕີນ.
- ທາສີຮູບມື ແລະ ຕີນ ໂດຍນຳໃຊ້ສີຕາມໃຈ1.

# ໜ້າທີ່ຂອງຫູ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຫູ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫູໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ຫູໃຊ້ໄວ້ຟັງ.
- ທາສີຮູບເດັກນ້ອຍ ແລະ ວິທະຍຸ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຂອງຕາ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຕາ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຕາໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ຕາໃຊ້ໄວ້ເບິ່ງ.
- ທາສີຮູບຕາ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຂອງດັງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງດັງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ດັງໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ດັງໃຊ້ໄວ້ດົມກິ່ນ ແລະ  ຫາຍໃຈ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຂອງປາກ, ແຂ້ວ ແລະ ລີ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ປາກ, ແຂ້ວ ແລະ ລີ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ປາກ, ແຂ້ວ ແລະ ລີ້ນໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ປາກໃຊ້ໄວ້ເວົ້າ, ແຂ້ວໃຊ້ໄວ້ຫຍໍ້າ, ລີ້ນໃຊ້ໄວ້ຊີມລົດ.
- ທາສີຮູບເດັກນ້ອຍກິນອາຫານ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຂອງຕີນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຕີນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຄົນໃນຮູບນີ້ກໍາລັງເຮັດຫຍັງ? ຕີນໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ຕີນໃຊ້ໄວ້ຍ່າງ.
- ທາສີຮູບຄົນຍ່າງ ໂດຍນໍາໃຊ້ສີຕາມໃຈ.

# ໜ້າທີ່ຂອງມື



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງມື.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ມືໃຊ້ໄວ້ເຮັດຫຍັງ?
- ສະຫຼຸບ: ມືໃຊ້ໄວ້ຈັບບາຍ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຮ່າງກາຍ







**ເນື້ອໃນການຮຽນຂອງຫົວຂໍ້ ການຈະເລີນເຕີບໃຫຍ່ຂອງຮ່າງກາຍປະກອບມີ:**

1. ກິນອາຫານ ແລະ ດື່ມນໍ້າ.
2. ນອນ/ພັກຜ່ອນ.
3. ອະນາໄມຮ່າງກາຍ.
4. ຂັບຖ່າຍ.
5. ຮູບຮ່າງລັກສະນະ.

# ກິນອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານທີ່ເປັນປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີອາຫານຫຍັງແດ່? ຢາກໃຫ້ຮ່າງກາຍຈະເລີນເຕີບໃຫຍ່ ຄວນກິນອາຫານຫຍັງແດ່?
- ສະຫຼຸບ: ກິນອາຫານທີ່ເປັນປະໂຫຍດເຊັ່ນ: ຜັກ, ໝາກໄມ້, ເຂົ້າ, ໄຂ່, ຊີ້ນ, ປາ.
- ທາສີຮູບອາຫານ ໂດຍນຳໃຊ້ສີຕາມໃຈ.

# ດື່ມນ້ຳ




**ຈຸດປະສົງ:** ເພື່ອໃຫ້ເດັກບອກການດື່ມເຄື່ອງດື່ມທີ່ເປັນປະໂຫຍດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຢາກໃຫ້ຮ່າງກາຍຈະເລີນເຕີບໃຫຍ່ຄວນດື່ມເຄື່ອງດື່ມຫຍັງແດ່?
- ສະຫຼຸບ: ດື່ມເຄື່ອງດື່ມທີ່ເປັນປະໂຫຍດເຊັ່ນ: ນ້ຳ ແລະ ນົມ.
- ທາສີຮູບເດັກນ້ອຍ ແລະ ເຄື່ອງດື່ມ ໂດຍນຳໃຊ້ສີຕາມໃຈ.

# ນອນ/ພັກຜ່ອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການນອນຖືກເວລາ ແລະ ພັກຜ່ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຢາກໃຫ້ຮ່າງກາຍແຂງແຮງຄວນນອນເວລາໃດ? ເວລາພັກຜ່ອນຫຼາຍຄວນເຮັດແນວໃດ?
- ສະຫຼຸບ: ຕ້ອງນອນຫຼັງຈາກກິນອາຫານທ່ຽງ ແລະ ເວລາພັກຜ່ອນ ບໍ່ລົບກວນຜູ້ອື່ນ.
- ທາສີຮູບເດັກນ້ອຍນອນ ໂດຍນຳໃຊ້ສີຕາມໃຈ.

# ອະນາໄມຮ່າງກາຍ

1



ເອົາຝາມືຖູກັນ

2



ເອົາຝາມືຖູຫຼັງຝາມື ແລະ
ຖູວ່າງນີ້ວມື

3



ເອົາຝາມືຖູຝາມື ແລະ
ນີ້ວຖູວ່າງນີ້ວມື

4



ຫຼັງນີ້ວມືຖູຝາມື

5



ຖູນີ້ວໂປ້ໂດຍຮອບ
ດ້ວຍຝາມື

6



ປາຍນີ້ວມືຖູຂວາງຝາມື

7



ຖູຮອບຄໍ່ມື

**ຈຸດປະສົງ:** ເພື່ອໃຫ້ເດັກບອກການລ້າງມືຕາມ 7 ຂັ້ນຕອນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ມືສະອາດຄວນເຮັດແນວໃດ?
- ສະຫຼຸບ: ຢາກໃຫ້ມືສະອາດຕ້ອງລ້າງມື ຕາມ 7 ຂັ້ນຕອນ.
- ທາສີຮູບມື ໂດຍນໍາໃຊ້ສີຕາມໃຈ.

# ຂັບຖ່າຍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຂັບຖ່າຍທີ່ຖືກຕ້ອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານຄວນຂັບຖ່າຍເວລາໃດແດ່?
- ສະຫຼຸບ: ຕ້ອງຂັບຖ່າຍຖືກຕ້ອງຕາມເວລາທີ່ກຳນົດໃນຕາຕະລາງປະຈຳວັນ.
- ທາສີຮູບເດັກນ້ອຍນັ່ງຖ່າຍ ໂດຍນຳໃຊ້ສີຕາມໃຈ.

# ຮູບຮ່າງລັກສະນະ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຮູບຮ່າງລັກສະນະຂອງຄົນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ຄົນໃດຕຸ້ຍ ແລະ ຄົນໃດຈ່ອຍ?
- ສະຫຼຸບ: ຮູບຮ່າງລັກສະນະຂອງຄົນເຮົາມີຕຸ້ຍ ແລະ ຈ່ອຍ.
- ທາສີຮູບເດັກນ້ອຍຄົນຕຸ້ຍ ໂດຍນຳໃຊ້ສີຕາມໃຈ.

# ຮູບຮ່າງລັກສະນະ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຮູບຮ່າງລັກສະນະຂອງຄົນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ຄົນໃດຕໍ່າ ແລະ ຄົນໃດສູງ?
- ສະຫຼຸບ: ຮູບຮ່າງລັກສະນະຂອງຄົນເຮົາມີ ຕໍ່າ ແລະ ສູງ.
- ທາສີຮູບເດັກນ້ອຍຄົນສູງ ໂດຍນໍາໃຊ້ສີຕາມໃຈ.

# ຮັກສາຄວາມສະອາດ ແລະ ຄວາມປອດໄພ



**ເນື້ອໃນການຮຽນຂອງຫົວຂໍ້ ການຮັກສາຄວາມສະອາດ ແລະ ຄວາມປອດໄພປະກອບມີ:**

1. ຜົມສະອາດ.
2. ຫູສະອາດ.
3. ຕາ ແລະ ດັງສະອາດ.
4. ປາກ ແລະ ແຂ້ວ ສະອາດ.
5. ຕີນ, ມື ສະອາດ.

# ຜົມສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການອະນາໄມຜົມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຢາກໃຫ້ຜົມສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການອະນາໄມຜົມໃຫ້ສະອາດຕ້ອງສະຜົມ.
- ທາສີຮູບເດັກນ້ອຍສະຜົມ ໂດຍນຳໃຊ້ສີຕາມໃຈ.

# ຜົມສະອາດ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກການອະນາໄມຜົມ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ກຳລັງເຮັດຫຍັງ? ຢາກໃຫ້ຜົມງາມ ແລະ ເປັນລະບຽບຄວນເຮັດແນວໃດ?
- ສະຫຼຸບ: ຢາກໃຫ້ຜົມງາມ, ເປັນລະບຽບຕ້ອງຫວີ ແລະ ມັດຜົມ.
- ທາສີຮູບເດັກນ້ອຍຫວີຜົມ ແລະ ມັດຜົມ ໂດຍນຳໃຊ້ສີຕາມໃຈ.

# ຫູສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ ແລະ ປ້ອງກັນຫູ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ຫູສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນຫູ ຕ້ອງອະນາໄມຫູດ້ວຍການເຊັດຫູດ້ວຍຜ້າສະອາດ, ບໍ່ເອົາຂອງແຂງແຍ່ຫູ, ບໍ່ໃຫ້ນ້ຳເຂົ້າຫູ.
- ທາສີຮູບຫູ ໂດຍນຳໃຊ້ສີຕາມໃຈ.

# ຕາສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ ແລະ ປ້ອງກັນຕາ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ຕາສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນຕາ ຕ້ອງລ້າງຕາດ້ວຍນ້ຳທີ່ສະອາດ, ລະວັງບໍ່ໃຫ້ຂອງແຂງແທງຕາ.
- ທາສີຮູບຕາ ໂດຍນຳໃຊ້ສີຕາມໃຈ.

# ດັງສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ ແລະ ປ້ອງກັນດັງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບແລະຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ດັງສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນດັງ ຕ້ອງເຊັດດັງດ້ວຍຜ້າສະອາດ, ບໍ່ເອົາຂອງແຂງແຍ່ໃສ່ຮູດັງ.
- ທາສີຮູບດັງ ໂດຍນໍາໃຊ້ສີຕາມໃຈ.

# ປາກ ແລະ ແຂ້ວ ສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ, ປ້ອງກັນປາກ ແລະ ແຂ້ວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຢາກໃຫ້ປາກ ແລະ ແຂ້ວສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນແຂ້ວ ຕ້ອງບ້ວນປາກ, ຖູແຂ້ວ ກ່ອນນອນ ແລະ ຫຼັງຈາກກິນອາຫານທຸກຄັ້ງ.
- ທາສີຮູບເດັກນ້ອຍຖູແຂ້ວ ໂດຍນຳໃຊ້ສີຕາມໃຈ.

# ຕີນສະອາດ





**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ ແລະ ປ້ອງກັນຕີນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ຕີນສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນຕີນຕ້ອງ ຕັດເລັບຕີນ, ໃສ່ເກີບ, ບໍ່ຫຼິ້ນເປື້ອນ.
- ທາສີຮູບຕີນ ແລະ ເກີບ ໂດຍນຳໃຊ້ສີຕາມໃຈ.

# ມືສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດ ແລະ ປ້ອງກັນມື.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກໃຫ້ມືສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດ ແລະ ປ້ອງກັນມືຕ້ອງຕັດເລັບມື, ບໍ່ຫຼິ້ນເປື້ອນ ແລະ ບໍ່ຈັບຂອງແຫຼມຄົມ.
- ທາສີຮູບມື ໂດຍນຳໃຊ້ສີຕາມໃຈ.

# ປະຕິບັດຕົນທີ່ເໝາະສົມກັບອາຍຸ



**ເນື້ອໃນການຮຽນຂອງຫົວຂໍ້ການປະຕິບັດຕົນທີ່ເໝາະສົມກັບອາຍຸປະກອບມີ:**

1. ນຸ່ງເຄື່ອງ.
2. ແຕ່ງຕົວ.
3. ກິນ ແລະ ດື່ມ.
4. ມ້ຽນເຄື່ອງນອນ.
5. ມ້ຽນເຄື່ອງໃຊ້ຕົນເອງ.

# ນຸ່ງເຄື່ອງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການນຸ່ງໂສ້ງ ແລະ ເສື້ອທີ່ຖືກຕ້ອງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ນຸ່ງໂສ້ງ ແລະ ເສື້ອຕ້ອງເຮັດແນວໃດ?
- ສະຫຼຸບ: ນຸ່ງເສື້ອຕ້ອງຕິດກະດຸມເສື້ອໃຫ້ຖືກ, ປີ້ນຄໍເສື້ອ, ນຸ່ງສິ້ນ ແລະ ກະໂປ່ງ ຕ້ອງເກາະຂໍ, ນຸ່ງໂສ້ງຕ້ອງໃສ່ຊິບໂສ້ງ.
- ທາສີຮູບເດັກນ້ອຍນຸ່ງເຄື່ອງ ໂດຍນໍາໃຊ້ສີຕາມໃຈ.

# ແຕ່ງຕົວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການແຕ່ງຕົວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢາກເປັນເດັກຈົບງາມ ແລະ ສະອາດຕ້ອງເຮັດແນວໃດ?
- ສະຫຼຸບ: ການແຕ່ງຕົວຕ້ອງຫວີຜົມ ແລະ ທາແປ້ງໃຫ້ຈົບງາມ.
- ທາສີຮູບເດັກນ້ອຍຫວີຜົມ ໂດຍນຳໃຊ້ສີຕາມໃຈ.

# ກິນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນເວລາກິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເຫັນຫຍັງໃນຮູບນີ້? ເວລາກິນຕ້ອງເຮັດແນວໃດ?
- ສະຫຼຸບ: ເວລາກິນຕ້ອງໃຊ້ບ່ວງຕັກອາຫານ, ບໍ່ໃຫ້ຕົກເຮ່ຍ ແລະ ບໍ່ໃຫ້ເປື້ອນປາກ.
- ທາສີຮູບເດັກນ້ອຍກິນອາຫານ ໂດຍນຳໃຊ້ສີຕາມໃຈ.

# ດື່ມ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນເວລາດື່ມ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເວລາດື່ມຕ້ອງເຮັດແນວໃດ?
- ສະຫຼຸບ: ເວລາດື່ມບໍ່ໃຫ້ນໍ້າເຮ່ຍ ແລະ ຈັບຈອກໃຫ້ຖືກວິທີ.
- ທາສີຮູບເດັກນ້ອຍດື່ມນໍ້າ ໂດຍນໍາໃຊ້ສີຕາມໃຈ.

# ມ້ຽນເຄື່ອງນອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການມ້ຽນເຄື່ອງນອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເວລາຕື່ນນອນແລ້ວຕ້ອງເຮັດແນວໃດ?
- ສະຫຼຸບ: ເວລາຕື່ນນອນແລ້ວ ຕ້ອງມ້ຽນບ່ອນນອນ, ພັບຜ້າຫົ່ມໃຫ້ເປັນລະບຽບ ແລະ ມ້ຽນໃຫ້ຖືກບ່ອນທີ່ກຳນົດ.
- ທາສີຮູບເດັກນ້ອຍມ້ຽນບ່ອນນອນ ໂດຍນຳໃຊ້ສີຕາມໃຈ.

# ມ້ຽນເຄື່ອງໃຊ້ຕົນເອງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການມ້ຽນເຄື່ອງໃຊ້ຕົນເອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເວລາໃຊ້ສິ່ງຂອງເຄື່ອງໃຊ້ແລ້ວຕ້ອງເຮັດແນວໃດ?
- ສະຫຼຸບ: ຕ້ອງເກັບມ້ຽນເຄື່ອງຕົນເອງໃຫ້ເປັນລະບຽບເຊັ່ນ: ຟອຍຖູແຂ້ວ, ຢາຖູ ແຂ້ວ, ຖົງປຶ້ມ, ປຶ້ມ, ສໍ, ເກີບ, ເຄື່ອງນຸ່ງ ແລະ ເຄື່ອງຫຼິ້ນປະເພດຕ່າງໆ.
- ທາສີຮູບເດັກນ້ອຍມ້ຽນເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ ໂດຍນຳໃຊ້ສີຕາມໃຈ.